## ບົດຮຽນໂຮງຮຽນວັນອາທິດ

ວັນອາທິດ ທີ 7 ພຶສພາ 2023 (05-07-2023)

---

## ການລໍ້ລວງໃຫ້ເອົາສິ່ງອື່ນກ່ອນພຣະເຈົ້າ

*ຜູ້ໃດທີ່ທ່ານຄິດເຫັນໄດ້ງ່າຍທີ່ຈະເວົ້າໂອ້ອວດກ່ຽວກັບຜູ້ນັ້ນ?*

**ຈຸດສຳຄັນໃນບົດຮຽນ:** ຄວາມຍິນດີອັນຍິ່ງໃຫຍ່ທີ່ສຸດມາຈາກການຍົກຍໍສັຣເສີນພຣະເຈົ້າ.

**ພຣະຄັມພີຕອບສນອງຕໍ່ຊີວິດ:**

ຖ້າເຈົ້າບໍ່ເປົ່າເຂົາ (horn) ຂອງເຈົ້າເອງ, ແລ້ວໃຜຈະເປົ່າໃຫ້ເຈົ້າ? ພວກເຮົາຮູ້ສຶກດີໃຈເມື່ອເຮົາປະສົບຜົນສຳເຣັດສິ່ງໃດສິ່ງນຶ່ງ. ກ່ຽວກັບຄວາມສຳເຣັດແລະປະສົບການດີໆເຫຼົ່ານັ້ນ, ພວກເຮົາມັກຢາກບອກຄົນອື່ນ. ໜ້າເສັຽດາຍໃນຂັ້ນຕອນບອກຄົນອື່ນນັ້ນຄຳເວົ້າຂອງເຮົາມັກອວ່າຍມາ "**ແນມເບິ່ງຂ້ອຍ!**" ພວກເຮົາບໍ່ຈຳເປັນຕ້ອງເວົ້າຄຳຕົງໆເຫຼົ່ານັ້ນ, ແຕ່ມັນກໍສາມາດປີ້ນມາຍົກຍໍຕົວເຮົາເອງ. ເວັບໄຊຂ່າວສານມວນຊົນມັກຈະປີ້ນສິ່ງທີ່ເຂົາໂພສເພື່ອເຮັດໃຫ້ຄົນຜູ້ນັ້ນດູດີ ແລະ ຍິ່ງຄົນນັ້ນໄດ້ຮັບ "likes" ຍ້ອນຄຳທີ່ລາວໄດ້ເວົ້າຫຼາຍເທົ່າໃດ ຄົນຜູ້ນັ້ນກໍຍິ່ງຮູ້ສຶກພູມໃຈຫຼາຍຂຶ້ນເທົ່ານັ້ນ. ການຍົກຍໍຕົນເອງແມ່ນການຫຼອກລວງແລະຈະຫາຍໄປໃນພິບຕາ. ຈະມີຫຍັງເກີດຂຶ້ນຖ້າສິ່ງທີ່ໂພສເທື່ອໜ້າບໍ່ໄດ້ຮັບ "likes" ຫຼາຍ? ພວກເຮົາອາດຮູ້ສຶກຜ່າຍແພ້. ພຣະເຢຊູໄດ້ຖືກລໍ້ລວງໃຈໃຫ້ຍົກຍໍພຣະອົງເອງໃນທາງທີ່ບໍ່ຖືກຕ້ອງ. ພຣະເຢຊູສົມຄວນແກ່ການສັຣເສີນແລະການຍົກຍໍຈາກເຮົາແນ່ນອນ, ແຕ່ພຣະອົງບໍ່ໄດ້ສແວງຫາສິ່ງນັ້ນຊຶ່ງບໍ່ໄດ້ຢູ່ໃນແຜນການຂອງພຣະບິດາ. ຂນະພວກເຮົາພິຈາຣະນາເບິ່ງການທົດລອງຂອງພຣະເຢຊູ, ພວກເຮົາຈະພົບຄວາມຍິນດີມາພ້ອມກັບການຍົກຍໍພຣະເຈົ້າແທນທີ່ຈະຍົກຍໍຕົວເຮົາເອງ.

**ພຣະຄັມພີກ່າວວ່າແນວໃດ:** (ເບິ່ງຕາມຂໍ້ 1, 2, ແລະ 3,)

### ການສຶກສາພຣະຄັມພີ

**1. <u>ມັດທາຍ 4:8-11.</u>**

*8 ອີກເທື່ອນຶ່ງພະຍາມານໄດ້ພາພຣະອົງຂຶ້ນເມືອເທິງພູສູງໆ ແລະໄດ້ສະແດງບັນດາຣາຊແຜ່ນດິນໃນໂລກ ທັງສງ່າຣາສີຂອງຣາຊແຜ່ນ*
*ດິນເຫຼົ່ານັ້ນຊີ້ໃຫ້ພຣະອົງເຫັນ. 9 ແລ້ວໄດ້ທູນພຣະອົງວ່າ, "ຖ້າທ່ານຈະຂາບລົງໄຫວ້ເຮົາ ເຮົາຈະເອົາສິ່ງເຫຼົ່ານີ້ໃຫ້ແກ່ທ່ານ." 10 ພຣະເຢ*
*ຊູຊົງຕອບມັນວ່າ,"ຊາຕານເອີຍ, ຈົ່ງໜີໄປເສັຽເພາະມີຄຳຂຽນໄວ້ໃນພຣະຄັມພີວ່າ,'ຈົ່ງຂາບໄຫວ້ພຣະອົງຜູ້ເປັນພຣະເຈົ້າຂອງເຈົ້າແລະ*
*ປະຕິບັດພຣະອົງແຕ່ຜູ້ດຽວ'." 11 ແລ້ວພະຍາມານຈຶ່ງໜີຈາກພຣະອົງໄປ ແລະເບິ່ງແມ, ມີພວກເທວະດາມາປະຕິບັດຮັບໃຊ້ພຣະອົງ.*

ສິ່ງນຶ່ງທີ່ຄຣິສະຕຽນສາມາດເບິ່ງໄປຂ້າງໜ້າຄືການດຳເນີນຊີວິດໃນການສະຖິດນຳຂອງພຣະຄຣິດໃນຣາຊອານາຈັກຂອງພຣະອົງ. ສິ່ງນີ້ໄດ້ຖືກທຳນວາຍແລະໄດ້ສັນຍາຫຼາຍສະຕະວັດກ່ອນພຣະຄຣິດສະເດັດມາໃນໂລກ.

ໃຫ້ເຮົາເອົາສິ່ງນີ້ໄວ້ໃນໃຈຂນະທີ່ພວກເຮົາເບິ່ງຊາຕານທົດລອງພຣະເຢຊູເທື່ອທີສາມ. ຊາຕານໄດ້ເອົາສິ່ງທີ່ພຣະເຈົ້າໄດ້ສັນຍາໄວ້ກັບພຣະອົງແລ້ວມາລໍ້ລວງພຣະອົງ! ດັ່ງນັ້ນສິ່ງລໍ້ລວງໃນນັ້ນແມ່ນຫຍັງ? ການລໍ້ລວງນັ້ນຄື ພຣະເຢຊູຈະສາມາດຮັບແຜ່ນດິນໂລກໄດ້ດຽວນີ້-ໂດຍບໍ່ຕ້ອງລໍຊ້າແລະບໍ່ໄດ້ໄປທີ່ໄມ້ກາງແຂນທີ່ຫ້າງຕຽມໄວ້ສຳລັບພຣະອົງ. ຊາຕານສເນີທາງລັດ: ການປົກຄອງແລະສເວີຍຣາດຣາຊອານາຈັກໂດຍບໍ່ໄດ້ທົນທຸກທໍຣະມານຫຍັງເລີຍ.

ຊາຕານເຮັດສິ່ງນີ້ກັບເຮົາ. ມັນສເນີສິ່ງດີ-ທັງສັນຍາວ່າຈະໃຫ້ສິ່ງດີ-ແຕ່ມັນຫຼອກເຮົາໃຫ້ຮັບສິ່ງເຫຼົ່ານັ້ນໃນທາງບາບ. ພວກເຮົາເຫັນສິ່ງທີ່ຄ້າຍຄືກັບຢູ່ໃນຄຳອຸປມາຂອງພຣະເຢຊູໃນເລື່ອງລູກທີ່ເສັຍ (ລູກາ 15). ລູກຊາຍມີຊັບສົມບັດລໍຢູ່, ແຕ່ຍ້ອນຄວາມເຫັນແກ່ຕົວ, ລາວຈຶ່ງຢາກໃຫ້ພໍ່ຂອງລາວຍົກຊັບສົມບັດໃຫ້ລາວທັນທີທັນໃດ. ພວກເຮົາມັກເອົາການໄຫວ້ພະທຽມຄວບຄູ່ກັບການນະມັສການຮູບທີ່ສ້າງຂຶ້ນດ້ວຍໄມ້ຫຼືໂລຫະ, ແຕ່ການໄຫວ້ພະທຽມເກີດຂຶ້ນເມື່ອເຮົາວາງສິ່ງອື່ນໄວ້ກ່ອນພຣະເຈົ້າ, ມັນແມ່ນຄວາມໄດ້ສິ່ງໃດສິ່ງນຶ່ງຫຼາຍກວ່າພຣະເຈົ້າ. ພວກເຮົາສາມາດແມ້ກະທັ້ງເຮັດໃຫ້ສິ່ງດີເປັນພະທຽມເພາະວ່າ ເມື່ອເຮົາເອົາສິ່ງດີແລະວາງມັນກ່ອນພຣະເຈົ້າ, ນັ້ນແມ່ນຢາກໄດ້ສິ່ງອື່ນຫຼາຍກວ່າຢາກໄດ້ພຣະເຈົ້າ-ແລະນັ້ນແມ່ນນິຍາມຂອງການໄຫວ້ພະທຽມ.

*ແມ່ນຫຍັງແດ່ໃນວັທນາທັມຂອງເຮົາທີ່ຊາຕານເອົາມາລໍ້ລວງເຮົາຊຶ່ງເຮົາເກືອບຈະນະມັສການສິ່ງເຫຼົ່ານັ້ນ?*

ສຳລັບພຣະເຢຊູທີ່ຈະປົກຄອງຣາຊອານາຈັກແຜ່ນດິນໂລກເປັນສິ່ງທີ່ດີ, ແຕ່ການຕິດຕາມສິ່ງນັ້ນເໜືອການເຊື່ອຟັງພຣະບິດາເປັນສິ່ງທີ່ຜິດ. ພຣະເຢຊູໄດ້ປະຕິເສດສິ່ງນັ້ນ ແລະຕອບໂຕ້ດ້ວຍການເວົ້າຄວາມຈິງໃນພຣະບັນຍັດສອງ 6:13 ວ່າ: "'*ຈົ່ງຂາບໄຫວ້ພຣະອົງຜູ້ເປັນພຣະເຈົ້າຂອງເຈົ້າ ແລະປະຕິບັດພຣະອົງແຕ່ຜູ້ດຽວ'.*" ຊາຕານທຳທຸຣະກິດກ່ຽວກັບການໄຫວ້ພະທຽມຢ່າງໜັກທຸກວັນນີ້. ເປົ້າໝາຍຂອງມັນແມ່ນເພື່ອໃຫ້ເຮົາຂາບໄຫວ້ສິ່ງອື່ນຫຼາຍກວ່າຂາບໄຫວ້ພຣະເຈົ້າ. ມັນຢາກໃຫ້ເຮົາ "ກົ້ມຂາບ" ສິ່ງເຫຼົ່ານີ້ເພາະວ່າມັນຢູ່ຫຼັງສິ່ງເຫຼົ່ານັ້ນ. ພວກເຮົາກົ້ມລົງໄຫວ້ຜີຮ້າຍ. ໃຫ້ພວກເຮົາພິຈາຣະນາສິ່ງດີສາມສິ່ງທີ່ພຣະເຈົ້າປະທານໃຫ້ແລະໄດ້ກາຍເປັນສິ່ງທີ່ໂຄຣົບ.

- **ເງິນ**. ເງິນບໍ່ແມ່ນສິ່ງຊົ່ວຮ້າຍ, ແຕ່ "ການຮັກເງິນຄຳເປັນເຄົ້າມູນຂອງຄວາມຊົ່ວທຸກຢ່າງ" (1 ຕມທ 1:10ກ). ຊາຕານໃຊ້ຄວາມຢາກໄດ້ເງິນຂອງເຮົາເພື່ອລໍ້ເຮົາໃຫ້ກົ້ມລົງຂາບມັນ.
- **ເຣື່ອງເພດ.** ເຣື່ອງເພດເປັນຂອງຂວັນທີ່ດີຈາກພຣະເຈົ້າ, ແຕ່ພຣະເຈົ້າໄດ້ອອກແບບການແຕ່ງງານຣະຫວ່າງຊາຍຜູ້ນຶ່ງແລະຍິງຜູ້ນຶ່ງເປັນພັນທະສັນຍາຕລອດຊີວິດແມ່ນບ່ອນດຽວທີ່ຄວາມຕ້ອງການທາງເພດເປັນທີ່ພໍໃຈ. ຊາຕານມັກຈະລໍ້ລວງເຮົາໃຫ້ພໍໃຈໃນການມີເພດສັມພັນນອກຄູ່ສົມຣົດຂອງເຮົາ.
- **ສິດອຳນາດ.** ສິດກໍແມ່ນຂອງປະທານທີ່ດີອີກຢ່າງນຶ່ງຈາກພຣະເຈົ້າ. ຊາຕານໃຊ້ສິດອຳນາດເພື່ອຈັດລະບຽບໃນໂລກນີ້, ແຕ່ເມື່ອເຮົາຖືສິດອຳນາດເພື່ອຄອບຄອງຄົນອື່ນ ແລະກອບໂກຍເອົາຜົນປໂຍດຂອງເຂົາມາເປັນຂອງຕົນເພື່ອປົນເປີຄວາມເຫັນແກ່ໄດ້ຂອງເຮົາເອງ, ພວກເຮົາໄດ້ຍຶດເອົາຂອງປະທານທີ່ດີ ແລະຍົກເປັນພະເຈົ້າອົງນຶ່ງ.

ການຕອບໂຕ້ຂອງພຣະເຢຊູຕໍ່ການທົດລອງນີ້ຄວນເປັນການຕອບໂຕ້ຂອງເຮົາເຊັ່ນດຽວກັນຄື: "'*ຈົ່ງຂາບໄຫວ້ພຣະອົງຜູ້ເປັນພຣະເຈົ້າ-ຂອງເຈົ້າ ແລະປະຕິບັດພຣະອົງແຕ່ຜູ້ດຽວ'.*"

## 2. <u>ພະບັນຍັດສອງ 6:10-12</u>.

*[10]ພຣະຜູ້ເປັນເຈົ້າຂອງເຮົາທັງຫລາຍໄດ້ຊົງສັນຍາແກ່ບັນພະບູລຸດຂອງພວກທ່ານຄື ອັບຣາຮາມ ອີຊາກແລະຢາໂຄບວ່າ ພຣະອົງຈະຊົງມອບແຜ່ນດິນຊຶ່ງມີຫົວເມືອງໃຫຍ່ທີ່ຈະເລີນຮຸ່ງເຮືອງ ຊຶ່ງທ່ານເອງບໍ່ໄດ້ສ້າງໃຫ້ແກ່ພວກທ່ານ. [11]ໃນເຮືອນທັງຫລາຍກໍຈະເຕັມໄປດ້ວຍຂອງດີທີ່ທ່ານບໍ່ໄດ້ຫາໄວ້ ມີນໍ້າສ້າງທີ່ພວກທ່ານບໍ່ໄດ້ຂຸດໄວ້ພ້ອມທັງມີສວນອະງຸ່ນ ແລະສວນໝາກກອກເທດທີ່ປູກຮຽບຮ້ອຍແລ້ວສະນັ້ນ ເມື່ອພຣະຜູ້ເປັນເຈົ້າຊົງນຳພວກທ່ານເຂົ້າໄປຢູ່ໃນແຜ່ນດິນແລ້ວກໍຈະມີອາຫານການກິນທຸກຢ່າງຕາມຄວາມຕ້ອງການ. [12]ແຕ່ພວກທ່ານຕ້ອງລະວັງໃຫ້ດີຈົ່ງຢ່າລືມພຣະຜູ້ເປັນເຈົ້າຜູ້ຊົງນຳພວກທ່ານອອກຈາກເອຢິບບ່ອນຕົກເປັນທາດ.*

ໃນຄຳເວົ້າຂອງ ຈອນ ແຄວວິນ, ຫົວໃຈຂອງເຮົາແມ່ນໂຮງງານຜລິດພະທຽມ. ພວກເຮົາຖືກລໍ້ລວງໃຫ້ສືບຕໍ່ຜລິດພະທຽມບໍ່ຢຸດບໍ່ຢ່ອນ, ພອນທຸກສິ່ງທີ່ພຣະອົງໄດ້ສັນຍາໄວ້: "*ແຕ່ພວກທ່ານຕ້ອງລະວັງໃຫ້ດີ ຈົ່ງຢ່າລືມພຣະຜູ້ເປັນເຈົ້າຜູ້ຊົງນຳພວກທ່ານອອກຈາກເອຢິບບ່ອນຕົກເປັນທາດ" (ຂໍ້ 12).*

ນີ້ກໍແມ່ນການລໍ້ລວງໃຈເຮົາເໝືອນກັນ. ພວກເຮົາມັກຈະລືມພຣະເຈົ້າເມື່ອຊີວິດລາບລື້ນດີ. ແລະເມື່ອເຫດຮ້າຍກະໜ່ຳ, ພວກເຮົາກໍຈະຫັນໜີໄປບ່ອນອື່ນກ່ອນທີ່ຈະເຂົ້າຫາພຣະເຈົ້າ. ແລ້ວ, ຖ້າເຮົາຈົດຈຳໄດ້ວ່າ ພຣະເຈົ້າເປັນແຫຼ່ງທີ່ມາຂອງສິ່ງດີທຸກຢ່າງ, ພວກເຮົາກໍຈະຫຼີກເວັ້ນຈາກການລໍ້ລວງໃຈສແວງຫາສິ່ງອື່ນໆເພື່ອໃຫ້ອີ່ມໃຈ ຊຶ່ງພຣະເຈົ້າຜູ້ດຽວເທົ່ານັ້ນຈັດຫາໃຫ້ໄດ້ຢ່າງແທ້ຈິງ.

ສຳລັບຊາວອິສຣາເອນ, ພຣະເຈົ້າກໍກຳລັງຈະຖອກເທໃສ່ຊີວິດຂອງເຂົາໃຫ້ເປັນເຈົ້າຂອງສິ່ງດີຫຼວງຫຼາຍ: ແຜ່ນດິນ, ເມືອງ, ເຮືອນ ອ່າງນ້ຳ, ສວນອະງຸ່ນ, ປ່າໝາກກອກເທດ. ຄົນເຫຼົ່ານັ້ນມີບົດບາດທີ່ຕ້ອງເຮັດ; ພວກເຂົາຕ້ອງຍຶດແຜ່ນດິນທີ່ພຣະເຈົ້າໄດ້ມອບໃຫ້ບັນພະບູລຸດຂອງພວກເຂົາຄືນຄື: ອັບຣາຮາມ, ອີຊາກ, ແລະຢາໂຄບ.

ຂັ້ນຕອນຂອງການຍຶດຄອງນີ້ອະນຸຍາດໃຫ້ໄພ່ພົນຂອງພຣະເຈົ້າເຂົ້າໄປໃນແຜ່ນດິນແຫ່ງພຣະສັນຍາແລະຈັດຫາສະຖານທີ່ ທີ່ຖືກສ້າງໄວ້ແລ້ວ, ເມືອງ, ສວນ, ແລະເຮືອນ-ຊຶ່ງພວກເຂົາຈະໄດ້ຢູ່ແລະທຳມາຫາກິນ. ເຖິງຢ່າງໃດກໍຕາມ ເມື່ອສິ່ງດີຕົກເປັນຂອງເຂົາ, ພວກເຂົາຕ້ອງໄດ້ປະເຊີນກັບພັຍອັນຕະລາຍໃນການພັກຜ່ອນຢູ່ກັບຂອງເຫຼົ່ານີ້ ແລະຈະສູນເສັຽການເພິ່ງພາແລະຂຶ້ນກັບພຣະອົງຜູ້ຊົງປະທານທຸກສິ່ງນີ້ໃຫ້ເຂົາ.

ຄວາມຍາກລຳບາກບໍ່ໄດ້ຂົ່ມຂູ່ຕໍ່ການເດີນກັບພຣະຄຣິດຄືກັບຄວາມຈະເຣີນຮຸ່ງເຮືອງ. ເມື່ອພວກເຮົາຢູ່ສະບາຍ, ພວກເຮົາກໍວາງເຄື່ອງປ້ອງກັນຕົວຂອງເຮົາລົງ. ພວກເຮົາເສັຍຊາ. ພວກເຮົາຄ່ອຍປ່ຽນການເພິ່ງພາຕົນເອງແລະເພິ່ງພາສິ່ງທີ່ພຣະອົງຫາໃຫ້ແທນການເພິ່ງພາພຣະອົງຜູ້ຈັດຫາໃຫ້ເຮົານັ້ນ.

ທາງຫຼີກເວັ້ນຈາກຄ້ອຍໝື່ນນີ້ແມ່ນເຮັດຄືໂມເຊຮຽກຮ້ອງໃຫ້ຄົນເຮັດ: ຈົ່ງຈຳໄວ້! ໂມເຊໄດ້ຢ້ຳເຕືອນໄພ່ພົນຂອງພຣະເຈົ້າວ່າພຣະເຈົ້າແມ່ນໃຜ: ພຣະອົງແມ່ນອົງພຣະຜູ້ເປັນເຈົ້າຜູ້ໄດ້ຕັ້ງຄຳໝັ້ນສັນຍາກັບເຂົາ. ພຣະອົງແມ່ນຜູ້ນຳເຂົາອອກຈາກການເປັນທາດໃນເອຢິບແລະສູ່ອິສຣະພາບ. ໄພ່ພົນຂອງພຣະອົງບໍ່ລືມສິ່ງນີ້ຈັກເທື່ອ. ພວກເຮົາກໍເໝືອນກັນ ບໍ່ຄວນລືມທຸກສິ່ງທີ່ພຣະເຈົ້າໄດ້ກະທຳເພື່ອເຮົາໃນພຣະຄຣິດ ແລະພຣະອົງໄດ້ຈັດຫາທຸກສິ່ງເພື່ອຄວາມຍິນດີແລະຄວາມສນຸກສນານແກ່ເຮົາ.

*ເປັນຄືແນວໃດໃນການຂອບພຣະຄຸນພຣະເຈົ້າໃນຊີວິດຂອງເຮົາແຕ່ລະວັນ?*

## 3. **<u>ພຣະບັນຍັດສອງ 6:13-15</u>.**

*13 ໃຫ້ຢຳເກງແລະຂາບໄຫວ້ແຕ່ພຣະຜູ້ເປັນເຈົ້າຂອງທ່ານອົງດຽວກັບທັງໃຫ້ສາບານໂດຍອອກພຣະນາມຂອງພຣະອົງເທົ່ານັ້ນ. 14 ຢ່າຂາບໄຫວ້ພະຂອງຊົນຊາດອື່ນໃດທີ່ຢູ່ອ້ອມແອ້ມທ່ານ. 15 ຖ້າພວກທ່ານຫາກດື້ດ້ານຂາບໄຫວ້ພະນັ້ນພຣະຜູ້ເປັນເຈົ້າຈະຊົງພຣະພິໂລດທ່ານຢ່າງຮຸນແຮງ ແລະຈະທຳລາຍພວກທ່ານຈົນໝົດສິ້ນ ເພາະວ່າ ພຣະຜູ້ເປັນເຈົ້າຂອງທ່ານຊົງຫວງແຫນພວກທ່ານ.*

ການຫວງແຫນເປັນສິ່ງບໍ່ດີເວລາມັນສະທ້ອນການອາຄາດແຄ້ນຄົນອື່ນ. ແຕ່ມັນກໍເປັນຄຸນເໝືອນກັນເວລາມັນໝາຍເຖິງການປົກປ້ອງສິ່ງໃດສິ່ງນຶ່ງທີ່ເປັນກັມສິດຂອງເຮົາໂດຍຊອບທັມ. ການຫວງແຫນເປັນການຕອບສນອງອັນຊອບທັມ. ເວລາໂມເຊບອກວ່າພຣະເຈົ້າເປັນພຣະເຈົ້າທີ່ຫວງແຫນ, ແມ່ນເພິ່ນພັລນາເຖິງຄວາມຮູ້ສຶກຂອງພຣະເຈົ້າທີ່ມີຕໍ່ໄພ່ພົນຂອງພຣະອົງ ຄືພວກທີ່ເຂົ້າມາສູ່ຄວາມສັມພັນກັບພຣະອົງ. ເຖິງແມ່ນວ່າການຫວງແຫນຈະເປັນການຕອບສນອງທີ່ຊອບທັມກໍຕາມ ເມື່ອຄົນໃດຄົນນຶ່ງລັກເອົາຄູ່ຄອງຂອງຄົນອື່ນໄປ, ພຣະເຈົ້າກໍຫວງແຫນຄົນເຫຼົ່ານັ້ນທີ່ເປັນຂອງພຣະອົງ. ການສົມຣົດເປັນລັກສນະສຳຄັນອັນນຶ່ງທີ່ພຣະຄັມພີໃຊ້ສຳລັບຄວາມສັມພັນຂອງພຣະເຈົ້າກັບໄພ່ພົນຂອງພຣະອົງ. ແລະໃນການສົມຣົດນັ້ນພຣະເຈົ້າເປັນສາມີທີ່ສັດຊື່, ບໍ່ເຄີຍບົກຜ່ອງ, ພໍໃຈໝົດ. ໂດຍທາງກົງກັນຂ້າມ, ພວກເຮົາອາດເປັນຄົນບໍ່ເຊື່ອຟັງ, ເປັນເຈົ້າສາວບໍ່ສັດຊື່. ຍ້ອນວ່າເຮົາເປັນເຈົ້າສາວຂອງພຣະອົງພຣະເຈົ້າຈຶ່ງຫວງແຫນພວກເຮົາ. ນັ້ນແມ່ນສິ່ງດີ! ໃນຂນະທີ່ເຮົາສືບຕໍ່ຖືກລໍ້ລວງໃຫ້ຫັນໜີຈາກພຣະເຈົ້າເພື່ອຕິດຕາມ “ຄົນຮັກ” ຂອງຄົນອື່ນ, ພຣະອົງຈະຕິດຕາມເຮົາໄປ. ພຣະອົງຈະບໍ່ປ່ອຍປະເຮົາເພາະວ່າເຮົາເປັນຂອງພຣະອົງ.

*ພວກເຮົາໄດ້ຮຽນຮູ້ຫຍັງຈາກບົດຮຽນວັນນີ້ກ່ຽວກັບການຖືກທົດລອງ?*

ທາງນຶ່ງທີ່ຈະເຂົ້າໃຈການທົດລອງແລະເປັນບາບ, ແມ່ນການຫັນໜີຈາກພຣະເຈົ້າເພື່ອຫາຄວາມພໍໃຈຈາກສິ່ງອື່ນ ຫຼືຄົນອື່ນ. ເວລາເຮົາຫັນໜີຈາກພຣະເຈົ້າເພື່ອຫາຄວາມພໍໃຈແລະຍິນດີທີ່ອື່ນ, ພຣະຄັມພີເອີ້ນເຮົາວ່າ "ຄົນຫຼິ້ນຊູ້" (ຢກບ 4:4). ນີ້ແມ່ນການທົດລອງທີ່ຊາວອິສຣາເອນອາດປະເຊີນຂນະທີ່ເຂົາເຂົ້າໄປແຜ່ນດິນແຫ່ງພຣະສັນຍາ: ພວກເຂົາອາດຖືກລໍ້ລວງໃຫ້ແລ່ນຕາມສິ່ງຂອງຝ່າຍໂລກຄືສິ່ງທີ່ຄົນຕ່າງຊາດແລ່ນຕາມ. ເພື່ອຫຼີກເວັ້ນຈາກສິ່ງນີ້, ຄົນທັງຫຼາຍຖືກຊັກຊວນໃຫ້ເຮັດສາມສິ່ງ: ຢຳເກງພຣະເຈົ້າ, ນະມັສການພຣະເຈົ້າ, ແລະສາບານໃນພຣະນາມພຣະເຈົ້າເທົ່ານັ້ນ.

ເວລາເຮົາໃຊ້ຊີວິດຕາມທີ່ພຣະເຈົ້າເອີ້ນເຮົາໃຫ້ດຳເນີນຊີວິດ, ພວກເຮົາເຄີຍປະສົບຄວາມຍິນດີອັນໃຫຍ່ຫຼວງ. ຄວາມພໍໃຈບໍ່ໄດ້ມາຈາກການຕິດຕາມສິ່ງອື່ນທີ່ເຮົາຄິດວ່າຈະໃຫ້ພໍໃຈເຮົາ. ພວກເຮົາສາມາດເວົ້າວ່າ ບໍ່ ຕໍ່ການທົດລອງເພື່ອຂາບລົງຕໍ່ສິ່ງທີ່ຊາຕານແລະໂລກໂຍນໃສ່ເຮົາເມື່ອເຮົາຈົດຈຳຄວາມຈິງຂໍ້ດຽວ: ຊີວິດທີ່ໃຊ້ໃນການນະມັສການແລະຍົກຍໍຜູ້ທີ່ຮັກເຮົາຢ່າງເລິກເຊິ່ງຈະນຳເຮົາສູ່ຄວາມພໍໃຈສເມີ.

*ກຸ່ມຂອງພວກເຮົາຈະຊ່ອຍກັນເອົາພຣະເຈົ້າເປັນອັນດັບນຶ່ງຢ່າງໃດ?*

## ນຳໃຊ້ໃນຊີວິດ

ຄວາມຍິນດີອັນຍິ່ງໃຫຍ່ທີ່ສຸດມາຈາກການຍົກຍໍສັຣເສີນພຣະເຈົ້າ. ຈົ່ງເລືອກນຶ່ງການນຳໃຊ້ໃນຊີວິດຕໍ່ລົງໄປນີ້:

- **ຈົ່ງເປີດເຜີຍພະຫຽມຂອງທ່ານ:** ຈົ່ງພິຈາຣະນາບ່ອນໃດທີ່ທ່ານຫັນໜີ ເມື່ອປະສົບຄວາມຫຍຸ້ງຍາກ. ທ່ານຊອກຫາຄວາມພໍໃຈແລະຄວາມຍິນດີຢູ່ໃສ? ຈົ່ງບົ່ງບອກພະຫຽມແລະຫັນໜີຈາກການເຊື່ອສິ່ງເຫຼົ່ານັ້ນ. ເລືອກວາງຄວາມເຊື່ອຂອງທ່ານໄວ້ກັບພຣະເຈົ້າເທົ່ານັ້ນ.
- **ຈົ່ງຂອບພຣະຄຸນ.** ຈົ່ງຂຽນຄຳອະທິຖານຕໍ່ພຣະເຈົ້າ. ຈົ່ງຂອບຄຸນພຣະອົງສຳລັບທຸກທາງທີ່ພຣະອົງທຳງານໃນຊີວິດທ່ານ. ຈົ່ງຂອບຄຸນເຈາະຈົງສິ່ງທີ່ພຣະອົງໄດ້ກະທຳເພື່ອທ່ານ.
- **ຈົ່ງປະຊຸມກັນ.** ຈົ່ງປະຊຸມກັບຜູ້ເຊື່ອອື່ນໆນຶ່ງຫຼືສອງຄົນເພດດຽວກັນ ແລະລົມກັນຢ່າງເປີດເຜີຍຂົງເຂດທີ່ທ່ານອາດຖືກທົດລອງໃຫ້ທ່ານເບິ່ງຄົນອື່ນຫຼືສິ່ງອື່ນນອກຈາກພຣະເຈົ້າ. ຈົ່ງຕົກລົງຢືນຢັດນຳກັນ ແລະອູ້ມຊູກັນໃນການເຮັດໃຫ້ພຣະເຈົ້າເປັນນຶ່ງດຽວຂອງການເຂົ້າເຝົ້າແລະນະມັສການຂອງທ່ານ.

ການລໍ້ລວງໃຫ້ຍົກຍໍຕົວເຮົາເອງມີຢູ່ອ້ອມຮອບເຮົາ. ເນື້ອໜັງຂອງເຮົາບໍ່ຕ້ອງການຫຼາຍໃນທິດທາງນັ້ນ. ແຕ່ການຍົກຍໍຕົວເຮົາເອງມັນກົງກັນຂ້າມກັບຄວາມຈະເລີນເຕີບໂຕຂອງເຮົາໃນຖານະເປັນຜູ້ຕິດຕາມພຣະເຢຊູ. ໃຫ້ເຮົາສາຣະພາບຄວາມບາບນັ້ນແລະຍົກຍໍພຣະເຈົ້າແທນ.

**ອຸປຖັມໂດຍ ລາວຊາວເທີນບັບຕິສສັມພັນ** https://ulsb.org/sunday-school-2/ **ແປໂດຍ PSI**